ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 376/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 ພຶດສະພາ 2022

# ຂໍ້ຕົກລົງ

## ວ່າດ້ວຍການປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມມະຕິຂອງກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 17 ພຶດສະພາ 2022 ແລະ ກອງປະຊຸມຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 13 ພຶດສະພາ 2022.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1: ຈຸດປະສົງ**

ເພື່ອປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດໃນການຈັດຕັ້ງປະຕິບັດ.

**ມາດຕາ 2: ປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ**

ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ຈາກ 3% ຕໍ່ປີ ມາເປັນ 3,1% ຕໍ່ປີ.

**ມາດຕາ 3:** ລົບລ້າງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ໄລຍະເກີນ 7 ວັນ ຫາ 14 ວັນ ແລະ ໄລຍະເກີນ 14 ວັນ ແຕ່ບໍ່ເກີນ 1 ປີ.

**ມາດຕາ 4: ຈັດຕັ້ງປະຕິບັດ**

ມອບໃຫ້ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ບັນດາສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ, ບັນດາທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 240/ທຫລ, ລົງວັນທີ 30 ມີນາ 2020.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**